ມະຫາ ສິລາ ວິຣະວົງສ໌

# ພົງສາວະດານລາວ

## ແຕ່ບູຮານເຖິງ 1946



東京外国語大学図書館
0000526751

# ພົງສາວະດານລາວ

## ແຕ່ບູຮານ ເຖິງ 1946

ມະຫາສິລາ ວີຣະວົງສ໌

東京外国語大学
図書館蔵書
526751
平成 14 年度

ຈັດພິມໂດຍ
**ຫໍສະໝຸດແຫ່ງຊາດ**

**ອຸປະຖຳ :**
ມູນນິທິ ໂຕໂຍຕ້າ
**TOYOTA FOUNDATION**
ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ
**A.S.P.B.**

ວຽງຈັນ ສ.ປ.ປ. ລາວ 2001



## ຊີວະປວັດຂອງຜູ້ຣິຈະນາ

ມະຫາສີລາ ວີຣະວົງສ໌ ເຖິງແກ່ມໍຣະນະກັມວັນທີ 18 ກຸມພາ 1987 ລວມອາຍຸໄດ້ 82 ປີ ນັບເປັນ ການສູນເສັຽເສົາຄ້ຳ ທີ່ທົດແທນໄດ້ຍາກ ຂອງວົງການຄົ້ນຄວ້າໃນ ປະເທດລາວ. ທ່ານພິຊະນະ ພີສານ ປະທານ ຄະນະກັມມະການ ວິທຍາສາດ ສັງຄົມ ແຫ່ງຊາດລາວ ສຣຸບໄວ້ວ່າ:

" ຕລອດຊີວິດຂອງທ່ານ ມະຫາສີລາ ວີຣະວົງສ໌ ໄດ້ອຸທິດຕົນໃຫ້ແກ່ການຄົ້ນຄວ້າພາສາ, ວັນນະຄະດີ, ປວັດສາດ ແລະ ຍັງເປັນຫ່ວງໃຍ ຈົນເຖິງວາຣະສຸດທ້າຍຂອງທ່ານ ດ້ວຍຢາກໃຫ້ ວັນນະຄະດີລາວ ສມັຍບູຮານ ໄດ້ຮັບການພິມອອກເຜີຍແຜ່ຄົບຊຸດຢ່າງທົ່ວເຖິງ. ບັນດາ ນັກສຶກສາ, ນັກຄົ້ນຄວ້າ ທັງລາວ ແລະ ຕ່າງປະເທດ ຕ່າງກໍຖືເອົາທ່ານເປັນບ່ອນອີງ ເພື່ອການເອົາຂໍ້ມູນ, ຫລາຍໆຄົນ ຍົກຍ້ອງ ແລະ ນັບຖືທ່ານເປັນອາຈານ ເປັນຜູ້ຊົງຄຸນວຸດທິ ເປັນນັກປາດຜູ້ນຶ່ງ ຂອງລາວ ... "

ມະຫາສີລາ ກາຍເປັນບຸກຄົນໃນຕຳນານ ຊຶ່ງປະຊາຊົນຢູ່ຕາມລຸ່ມສອງຝັ່ງແມ່ນ້ຳຂອງ ເລົ່າຂານ ກັນມາ ຜົນງານຂອງເພິ່ນແຜ່ຫລາຍໃນທົ່ວປະເທດ ແລະ ຈຳນວນບໍ່ຫນ້ອຍ ກະຈັດກະຈາຍຢູ່ທາງພາກ ອີສານຂອງປະເທດໄທ. ດັ່ງນັ້ນ ເພື່ອເປັນການແລກປ່ຽນຂໍ້ມູນ ແລະ ທັດສະນະຕ່າງໆ ກ່ຽວກັບທ່ານຜູ້ນີ້ ຈຶ່ງມີການສົມມະນາລະຫວ່າງ ນັກວິຊາການຈາກສອງຝັ່ງຂອງ ເມື່ອວັນທີ 28 ເມສາ 1990 ທີ່ນະຄອນ ວຽງຈັນ. ນັບເປັນການແລກປ່ຽນຄວາມຄິດຄວາມເຫັນ ໃນຫລາຍແງ່ມຸມ ເພາະມະຫາສີລາ ເປັນທັງ ນັກອັກສອນສາດ, ນັກພາສາ, ນັກວັນນະຄະດີ, ນັກກະວີ, ນັກປວັດສາດ, ນັກໂຫຣາສາດ ແລະ ນັກເຄື່ອນໄຫວ ກູ້ຊາດເພື່ອເອກະລາດຂອງລາວ ໃນຊຸມປີ 1940.

ມະຫາສີລາ ເກີດເມື່ອວັນທີ 1 ສິງຫາ 1905 ທີ່ບ້ານຫນອງຫມື່ນຖ່ານ ເມືອງອາດສາມາດ ຈັງຫວັດ ຮ້ອຍເອັດ ປະເທດໄທ ເປັນບຸດຄົນທີ 4 ໃນຈຳນວນ 9 ຄົນ ຂອງທິດແສນ ແລະນາງດາ ຊຶ່ງເປັນຄອບຄົວ ຊາວນາ ທີ່ສືບເຊື້ອສາຍມາຈາກ ພະຍາເມືອງປາກ ຜູ້ເປັນປູ່ທວດ. ພະຍາເມືອງປາກ ເປັນຕົ້ນຕະກູນທີ່ໄປ ຈາກນະຄອນຈຳປາສັກ.

ໃນປະຖົມວັຍ ທ່ານບວດເປັນຈົວ ຈຶ່ງໄດ້ຮຽນຫນັງສືຕົວທັມ, ຕົວຂອມ, ຕົວໄທ ແລະ ຕົວລາວ ສລັບດ້ວຍ ການຮຽນທາງໂລກ ຄື ໂຮງຮຽນປະຖົມ ເມື່ອໃຫຍ່ມາ ກໍໄປຮຽນຕໍ່ທີ່ກຸງເທບ ໂດຍຢູ່ໃນສະມະນະເພດ ຈົນສຳເລັດມະຫາຫ້າປະໂຍກ ໃນປີ 1928.

ອ່ານຕໍ່ຫນ້າ 279